ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

<u>ສຳນັກງານນາຍົກລັດຖະມົນຕີ</u>

ເລກທີ 160 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ 15.09.2008

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນງານແຫ່ງຊາດຕ້ານການຄ້າ ແລະ ຂູດຮີດທາງເພດເດັກ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງໃສ່ການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ໃນວັນທີ 20 ກັນຍາ 2007 ກ່ຽວກັບການເຫັນດີຮັບຮອງເອົາແຜນງານແຫ່ງຊາດ ຕ້ານການຄ້າ ແລະ ຂູດຮີດທາງເພດເດັກ, ຕາມແຈ້ງການເລກທີ 245/ຫສຊ, ລົງວັນທີ 11 ພະຈິກ 2007.
- ເພື່ອຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ ຂອງພັກ-ລັດ ດ້ານການສົ່ງເສີມ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ ໃຫ້ເປັນຮູບປະທຳ.

### ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1:** ຮັບຮອງ ແລະ ປະກາດໃຊ້ແຜນງານແຫ່ງຊາດ ຕ້ານການຄ້າ ແລະ ຂູດຮີດທາງເພດເດັກ ໄລຍະປີ 2007-2011.

**ມາດຕາ 2:** ມອບໃຫ້ປະທານຄະນະກຳມະທິການເພື່ອແມ່ ແລະ ເດັກແຫ່ງຊາດ ເປັນຜູ້ຮັບຜິດຊອບ, ພ້ອມທັງປະສານງານໂດຍກົງ ກັບຂະແໜງການກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍແຜນງານແຫ່ງຊາດ ຕ້ານການຄ້າ ແລະ ຂູດຮີດທາງເພດເດັກ ໃຫ້ມີປະສິດທິຜົນສູງ ໂດຍກຳນົດເວລາປະຕິບັດແຕ່ລະໜ້າວຽກ ຢ່າງລະອຽດ.

**ມາດຕາ 3:** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ນະຄອນຫຼວງ, ແຂວງ, ອົງການຈັດຕັ້ງສັງຄົມ ແລະ ທຸກໆພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4:** ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ